# Skills on court enforcement
# ທັກສະການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 4
## General knowledge in using of measures for the implementation of court judgments
## ຄວາມຮູ້ທົ່ວໄປກ່ຽວກັບການນໍາໃຊ້ມາດຕະການຕໍ່ການປະຕິບັດຄໍາຕັດສິນຂອງສານ

### 1. ຄວາມໝາຍມາດຕະການຕໍ່ການປະຕິບັດຄໍາຕັດສິນຂອງສານ

ມາດຕະການຕໍ່ການປະຕິບັດຄໍາຕັດສິນຂອງສານ ແມ່ນມາດຕະການຂອງອົງການປະຕິບັດຄໍາຕັດສິນຂອງສານວາງອອກໃນລັກສະນະເປັນຄໍາສັ່ງຕ່າງໆ ເພື່ອວາງໃສ່ຜູ້ບໍ່ປະຕິບັດຕາມຄໍາຕັດສິນຂອງສານດ້ວຍຄວາມສະມັກໃຈທັງໆທີ່ຜູ້ກ່ຽວມີເງື່ອນໄຂໃນການປະຕິບັດຄໍາຕັດສິນຂອງສານ ແຕ່ບໍ່ຍອມປະຕິບັດ, ເພື່ອຮັບປະກັນໃຫ້ຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໄດ້ຮັບການປະຕິບັດຢ່າງຖືກຕ້ອງຕາມຂັ້ນຕອນ, ກໍານົດເວລາ ແລະ ລະບຽບກົດໝາຍ.

**ຕົວຢ່າງ:** ສານປະຊາຊົນນະຄອນຫຼວງວຽງຈັນ ໄດ້ລົງຄໍາຕັດສິນເລກທີ 25/ຂຕ.ກ ລົງວັນທີ 8 ສິງຫາ 2018 ກ່ຽວກັບສັນຍາກູ້ຢືມບອກວ່າ: ໃຫ້ທ້າວ A (ຈໍາເລີຍ) ໃຊ້ແທນເງິນກູ້ຢືມຕົ້ນທຶນ 50.000.000 ກີບ ພ້ອມດອກເບ້ຍຈໍານວນ 8.000.000 ກີບ ໃຫ້ທ້າວ B (ໂຈດ). ພາຍຫຼັງສານດັ່ງກ່າວໄດ້ລົງຄໍາຕັດສິນແລ້ວ ບໍ່ມີຝ່າຍໃດຂໍອຸທອນ ແລະ ອົງການໄອຍະການປະຊາຊົນກໍບໍ່ໄດ້ສະເໜີຂັດຄ້ານ ສານຈຶ່ງໄດ້ສົ່ງສໍານວນຄໍາຕັດສິນໄປຍັງອົງການປະຕິບັດຄໍາຕັດສິນຂອງສານ.

ກໍລະນີຕົວຢ່າງດັ່ງກ່າວ, ຖ້າທ້າວ A (ຈໍາເລີຍ) ຫາກບໍ່ສາມາດນໍາເງິນມາຊໍາລະໃຫ້ໂຈດຕາມຄໍາຕັດສິນຂອງສານດ້ວຍຄວາມສະໝັກໃຈ, ພະນັກງານປະຕິບັດຄໍາຕັດສິນຂອງສານ ສາມາດນໍາໃຊ້ມາດຕະການຕໍ່ການປະຕິບັດຄໍາຕັດສິນຂອງສານຕາມຂັ້ນຕອນຂອງກົດໝາຍ.

ກ່ຽວກັບມາດຕະການທີ່ຈະນໍາໃຊ້ຕໍ່ຜູ້ບໍ່ປະຕິບັດຄໍາຕັດສິນຂອງສານ ຫຼື ນໍາໃຊ້ຕໍ່ຜູ້ຖືກປະຕິບັດຄໍາຕັດສິນຂອງສານນັ້ນ, ເປັນການບັງຄັບຮູບແບບໜຶ່ງເພື່ອໃຫ້ບຸກຄົນທີ່ກ່ຽວຂ້ອງຕ້ອງປະຕິບັດໃນການຊໍາລະຄ່າເສຍຫາຍທາງແພ່ງ ຫຼື ໃຊ້ແທນໜີ້ສິນຕາມຄໍາຕັດສິນຂອງສານ ແຕ່ການນໍາໃຊ້ມາດຕະການຕ່າງໆຕ້ອງພິຈາລະນາກ່ຽວກັບບັນຫາຄວາມເໝາະສົມທາງດ້ານລະບຽບການ, ທາງດ້ານກົດໝາຍ ແລະ ສອດຄ່ອງກັບຄໍາຕັດສິນທີ່ຈະປະຕິບັດ ຫຼື ສອດຄ່ອງກັບບຸກຄົນທີ່ຖືກປະຕິບັດຄໍາຕັດສິນຂອງສານ, ຊຶ່ງບາງກໍລະນີບຸກຄົນຜູ້ຖືກປະຕິບັດຄໍາຕັດສິນຂອງສານ ອາດບໍ່ມີຄວາມສາມາດໃນການປະຕິບັດແທ້ (ຜູ້ກ່ຽວບໍ່ມີເງິນ ແລະ ບໍ່ມີຊັບສິນ) ໂດຍບໍ່ມີເຈດຕະນາຫຼົບຫຼີກ, ກໍລະນີນີ້ເປັນປະເດັນທີ່ສໍາຄັນວ່າພະນັກງານປະຕິບັດຄໍາຕັດສິນຂອງສານຕ້ອງມີທັກສະ ຫຼື ວິທີການແກ້ໄຂໂດຍບໍ່ຂັດກັບກົດໝາຍ ຫຼື ລະບຽບການທີ່ກ່ຽວຂ້ອງ ແຕ່ສາມາດປະຕິບັດສໍາເລັດໄດ້.

### 2. ຄວາມສໍາຄັນກ່ຽວກັບມາດຕະການຕໍ່ປະຕິບັດຄໍາຕັດສິນຂອງສານ

ໃນສະພາບຄວາມເປັນຈິງຂອງສັງຄົມ, ເມື່ອມີຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ ຫຼື ຄໍາພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ແລະ ຖືກສົ່ງໄປຍັງອົງການປະຕິບັດຄໍາຕັດສິນຂອງສານນັ້ນ ບໍ່ໄດ້ໝາຍຄວາມວ່າຜູ້ຖືກປະຕິບັດຄໍາ

ຕັດສິນຂອງສານຈະປະຕິບັດຕາມດ້ວຍຄວາມສະໝັກໃຈ, ການບໍ່ຍິນດີປະຕິບັດດັ່ງກ່າວອາດຈະສະແດງອອກດ້ວຍການບໍ່ເຂົ້າມາພົບພະນັກງານປະຕິບັດຄຳຕັດສິນຂອງສານຕາມໝາຍຮຽກ ຫຼື ເອົາຕົວຫຼົບຫຼີກ, ມີການມອບໂອນກຳມະສິດກ່ຽວກັບຊັບສິນຂອງຕົນ ຫຼື ມີການຊຸກເຊື່ອງ, ຕໍ່ເຕີມຊັບ ຫຼື ປ່ຽນແປງລັກສະນະຂອງຊັບພາຍຫຼັງທີ່ສຳນວນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຖືກສົ່ງໄປຍັງອົງການປະຕິບັດຄຳຕັດສິນຂອງສານແລ້ວ ເພື່ອເປັນການຫຼົບຫຼີກຈາກການປະຕິບັດຄຳຕັດສິນຂອງສານ, ຊຶ່ງເຫດການດັ່ງກ່າວລ້ວນແຕ່ສົ່ງຜົນສະທ້ອນໂດຍກົງຕໍ່ການປະຕິບັດຄຳຕັດສິນຂອງສານ ແລະ ບໍ່ເປັນການງ່າຍທີ່ພະນັກງານປະຕິບັດຄຳຕັດສິນຂອງສານຈະແກ້ໄຂບັນຫາດັ່ງກ່າວໂດຍໄວໄດ້ ເນື່ອງຈາກວ່າຂັ້ນຕອນໃນການປະຕິບັດຄຳຕັດສິນຂອງສານແມ່ນຖືກກຳນົດໄວ້ໃນກົດໝາຍ ແລະ ລະບຽບການສະເພາະ ເຫັນວ່າມີຫຼາຍຂັ້ນຕອນສົມຄວນ ປະເດັນທີ່ສຳຄັນກໍແມ່ນ ຜູ້ຖືກປະຕິບັດຄຳຕັດສິນຂອງສານບໍ່ໃຫ້ການຮ່ວມມື.

ເພື່ອເປັນການສະກັດກັ້ນ ຫຼື ຈຳກັດບັນຫາຕ່າງໆທີ່ກ່າວມາຂ້າງເທິງ, ຈຳເປັນຕ້ອງມີກົດໝາຍ ແລະ ລະບຽບການທີ່ກຳນົດກ່ຽວກັບການນຳໃຊ້ມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ແລະ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງມີທັກສະໃນການສະກັດກັ້ນ ແລະ ນຳໃຊ້ມາດຕະການຢ່າງມີປະສິດທິພາບ.

ຈາກບັນຫາທີ່ກ່າວມາ, ມາດຕະການຕໍ່ການປະຕິບັດຄຳຕັດສິນຂອງສານ ຈຶ່ງມີຄວາມສຳຄັນ ແລະ ຈຳເປັນທີ່ສຸດທີ່ຈະນຳໃຊ້ຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໃນກໍລະນີບໍ່ຍິນຍອມປະຕິບັດຄຳຕັດສິນຂອງສານ ໂດຍເຈດຕະນາ, ເນື່ອງຈາກວ່າການນຳໃຊ້ມາດຕະການ ຈະເຮັດໃຫ້ການປະຕິບັດຄຳຕັດສິນຂອງສານສຳເລັດຕາມຄາດໝາຍໂດຍສະເພາະການໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ການໃຊ້ແທນໜີ້ສິນຕາມຄຳຕັດສິນຂອງສານ ແລະ ເປັນວິທີການໜຶ່ງທີ່ບັງຄັບຜູ້ຖືກປະຕິບັດຄຳຕັດສິນຂອງສານ ໃຫ້ປະຕິບັດຕາມຄຳຕັດສິນຂອງສານ.

ຖ້າບໍ່ມີການນຳໃຊ້ມາດຕະການດັ່ງກ່າວ ຈະເຮັດໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານຫຼຸດພົ້ນຈາກການປະຕິບັດ ແລະ ຈະເຮັດໃຫ້ຄຳຕັດສິນຂອງສານບໍ່ຖືກປະຕິບັດສຳເລັດໄດ້, ຊຶ່ງເປັນສາເຫດໜຶ່ງທີ່ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ ແລະ ເກີດຄວາມບໍ່ພໍໃຈຕໍ່ການປະຕິບັດໜ້າທີ່ວຽກງານຂອງພະນັກງານທີ່ກ່ຽວຂ້ອງ ໂດຍສະເພາະຜູ້ທີ່ໄດ້ຮັບຜົນປະໂຫຍດຈາກຄຳຕັດສິນຂອງສານ.

ເຖິງຢ່າງໃດກໍຕາມການນຳໃຊ້ມາດຕະການຂອງອົງການປະຕິບັດຄຳຕັດສິນຂອງສານ ຕ້ອງນຳໃຊ້ຢ່າງນິ້ມນວນ, ເດັດຂາດ, ຄຽງຄູ່ກັບການ ນຳໃຊ້ມາດຕະການກໍບໍ່ສາມາດປາສະຈາກໄດ້ການສຶກສາອົບຮົມຫຼາຍລົບຫຼາຍຕ່າວ ແລະ ປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍຢ່າງຄົບຖ້ວນ.

**3. ຈຸດປະສົງການນຳໃຊ້ມາດຕະການຕໍ່ການປະຕິບັດຄຳຕັດສິນຂອງສານ**

ການນຳໃຊ້ມາດຕະການຕໍ່ການປະຕິບັດຄຳຕັດສິນຂອງສານ ເພື່ອສະກັດກັ້ນການຫຼົບຫຼີກຈາກການປະຕິບັດຄຳຕັດສິນຂອງສານ ຊຶ່ງອາດຈະເກີດຂຶ້ນດ້ວຍວິທີການຊຸກເຊື່ອງຊັບສິນ, ມອບໂອນຊັບ ຫຼື ວິທີການອື່ນໆ, ອີກບັນຫາໜຶ່ງກໍເປັນວິທີການບັງຄັບໃຫ້ຜູ້ຖືກປະຕິບັດຄຳຕັດສິນຂອງສານ ປະຕິບັດຕາມຄຳຕັດສິນຂອງສານ, ສາມາດຟື້ນຟູສິ່ງທີ່ສູນເສຍໄປ ຫຼື ນຳເງິນມາຊຳລະທາງແພ່ງ, ໃຊ້ແທນໜີ້ສິນໃຫ້ຜູ້ທີ່ໄດ້ຮັບຄວາມເສຍຫາຍໄດ້, ແນໃສ່ເຮັດໃຫ້ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ກ່ຽວຂ້ອງໄດ້ຮັບການປະຕິບັດສຳເລັດຜົນ ແລະ ເປັນມາດຕະການທາງອ້ອມເພື່ອສະກັດກັ້ນການຫຼົບຫຼີກການປະຕິບັດທີ່ຈະເກີດຂຶ້ນໃນຕໍ່ໜ້າ.

"ການນຳໃຊ້ມາດຕະການໃນການປະຕິບັດຄຳຕັດສິນຂອງສານ ນອກຈາກມີຈຸດປະສົງບັງຄັບຜູ້ຖືກສານຕັດສິນໃຫ້ປະຕິບັດແລ້ວ ຍັງມີຈຸດປະສົງເຮັດໃຫ້ບຸກຄົນອື່ນເຫັນໄດ້ເຖິງຄວາມສັກສິດຂອງກົດໝາຍ ແລະ ການປະຕິບັດໜ້າທີ່

ຂອງອົງການປະຕິບັດຄຳຕັດສິນຂອງສານ, ເປັນການສະກັດກັ້ນການຫຼີກລ້ຽງການປະຕິບັດຄຳຕັດສິນຂອງສານ ຊຶ່ງອາດຈະເກີດຂຶ້ນໃນອານາຄົດຈາກຄະດີອື່ນທີ່ສານໄດ້ລົງຄຳຕັດສິນໄປແລ້ວ”[1].

**4. ການອອກຄຳສັ່ງຂອງອົງການປະຕິບັດຄຳຕັດສິນຂອງສານ**

ການປະຕິບັດຄຳຕັດສິນຂອງສານ, ເມື່ອພະນັກງານປະຕິບັດຄຳຕັດສິນຂອງສານຫາກໄດ້ນຳໃຊ້ວິທີການ ແລະ ຂັ້ນຕອນຕ່າງໆໃນການປະຕິບັດຄຳຕັດສິນຂອງສານແລ້ວ, ແຕ່ຜູ້ຖືກປະຕິບັດຄຳຕັດສິນຂອງສານຫາກມີເຈດຕະນາເອົາຕົວຫຼົບຫຼີກ ຫຼື ບໍ່ຍອມປະຕິບັດຕາມຄຳຕັດສິນຂອງສານ, ພະນັກງານປະຕິບັດຄຳຕັດສິນຂອງ ຕ້ອງສະເໜີຕໍ່ຫົວໜ້າຫ້ອງການ ຫຼື ຫົວໜ້າໜ່ວຍງານປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງຕ່າງໆກ່ຽວກັບການປະຕິບັດຄຳຕັດສິນຂອງສານ ເພື່ອເປັນການຮັບປະກັນໃນການປະຕິບັດຄຳຕັດສິນຂອງສານໃຫ້ປະສົບຜົນສຳເລັດ.

ການອອກຄຳສັ່ງຂອງອົງການປະຕິບັດຄຳຕັດສິນຂອງສານ ບໍ່ໄດ້ໝາຍຄວາມວ່າຈະມີພຽງຄຳສັ່ງກ່ຽວກັບການນຳໃຊ້ມາດຕະການເທົ່ານັ້ນ, ບັນດາຄຳສັ່ງຂອງອົງການປະຕິບັດຄຳຕັດສິນຂອງສານທີ່ອອກໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ບໍ່ລະເມີດກົດໝາຍ ເພື່ອເຮັດໃຫ້ການປະຕິບັດຄຳຕັດສິນຂອງສານໄດ້ຮັບຜົນສຳເລັດ ລ້ວນແຕ່ສາມາດອອກໄດ້.

ໂດຍອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ໃນຂັ້ນຕອນການດຳເນີນຄະດີຂອງສານ, ເພື່ອເຮັດໃຫ້ການຮ້ອງຟ້ອງ ມີຄວາມຮັບປະກັນໃນການປະຕິບັດ, ກົດໝາຍໄດ້ກຳນົດມາດຕະການໄວ້ ຊຶ່ງເອີ້ນວ່າ ມາດຕະການຮັບປະກັນໃນການຮ້ອງຟ້ອງ ຊຶ່ງສານທີ່ກ່ຽວຂ້ອງຕ້ອງນຳໃຊ້ໃນເວລາດຳເນີນຄະດີ ບໍ່ຈຳເປັນລໍຖ້າໃຫ້ມາຮອດຂັ້ນຕອນການປະຕິບັດຂອງອົງການປະຕິບັດຄຳຕັດສິນຂອງສານເຊັ່ນ:

- ຍຶດ ຫຼື ອາຍັດຊັບຂອງຄູ່ຄວາມທີ່ຢູ່ນຳຜູ້ກ່ຽວ ຫຼື ຢູ່ນຳຄົນອື່ນ;
- ບໍ່ອະນຸຍາດໃຫ້ຄູ່ຄວາມເຄື່ອນໄຫວ ຫຼື ກະທຳສິ່ງໃດໜຶ່ງທີ່ກ່ຽວຂ້ອງກັບຄະດີ;
- ບໍ່ອະນຸຍາດໃຫ້ຄູ່ຄວາມປະຕິບັດຂໍ້ຜູກພັນໃດໜຶ່ງ ທີ່ພົວພັນໃນຄະດີກັບຜູ້ອື່ນ;
- ອອກມາດຕະການຮັບປະກັນການຮ້ອງຟ້ອງອື່ນ[2].

ບັນດາປະເພດມາດຕະການ ໃນການປະຕິບັດຄຳຕັດສິນຂອງສານຕາມກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021 ໄດ້ກຳນົດລວມມີ:

1) ການພາຕົວ;
2) ການຍຶດຊັບ;
3) ການອາຍັດຊັບ;
4) ການຫັກເງິນ ໃນບັນຊີຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
5) ການຫັກລາຍຮັບ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
6) ການຫັກລາຍໄດ້ຈາກການດຳເນີນທຸລະກິດ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ;
7) ການມອບເງິນ ທີ່ບຸກຄົນອື່ນຮັກສາ ຫຼື ມີໜີ້ຕ້ອງສົ່ງ;

---

[1] ຕຳລາກໍ່ສ້າງວິຊາຊີບປະຕິບັດຄຳຕັດສິນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທຳແຫ່ງຊາດ, ປີ 2020, ໜ້າທີ 28

[2] ມາດຕາ 121 (ປັບປຸງ) ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບເລກທີ 13/ສພຊ ລົງວັນທີ 4 ກໍລະກົດ 2012

8) ມາດຕະການຮິບຄ່ອນ;

9) ມາດຕະການອື່ນ.

ບັນດາມາດຕະການທີ່ກ່າວມາຂ້າງເທິງ ຖ້າຫາກວ່າໃນຂັ້ນຕອນການດຳເນີນຄະດີ ສານຫາກຍັງບໍ່ໄດ້ນຳໃຊ້ ໂດຍສະເພາະແມ່ນມາດຕະການຍຶດ ຫຼື ອາຍັດຊັບ, ເມື່ອມາຮອດຂັ້ນຕອນການປະຕິບັດຄຳຕັດສີນຂອງສານ, ອົງການປະຕິບັດຄຳຕັດສີນຂອງສານ ສາມາດອອກຄຳສັ່ງຕໍ່ຊັບຂອງຜູ້ຖືກປະຕິບັດຄຳຕັດສີນຂອງສານໄດ້.

**5. ຜົນບັງຄັບປະຕິບັດຂອງຄຳສັ່ງຂອງອົງການປະຕິບັດຄຳຕັດສີນຂອງສານ**

ລັດຖະທຳມະນູນແຫ່ງ ສປປລາວ ໄດ້ກຳນົດກ່ຽວກັບຜົນບັງຄັບຂອງຄຳຕັດສີນຂອງສານໄວ້ຢ່າງຊັດເຈນເຊັ່ນ: ຄຳຕັດສີນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ, ທຸກອົງການພັກ, ອົງການລັດ, ແນວລາວສ້າງຊາດ, ອົງການມະຫາຊົນ, ອົງການສັງຄົມ, ອົງການສາກົນ ແລະ ພົນລະເມືອງລາວທຸກຄົນ ຕ້ອງເຄົາລົບ, ບຸກຄົນ ແລະ ອົງການທີ່ມີສ່ວນກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ[3] .

ໝາຍຄວາມວ່າ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສີນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ບໍ່ໄດ້ມີຜົນບັງຄັບປະຕິບັດສະເພາະຄູ່ຄວາມໃນຄະດີທີ່ກ່ຽວຂ້ອງເທົ່ານັ້ນ, ບຸກຄົນ ແລະ ບັນດາອົງການຕ່າງໆ ທັງພາກລັດ ແລະ ເອກະຊົນທີ່ກ່ຽວຂ້ອງລ້ວນແລ້ວແຕ່ຕ້ອງໃຫ້ການຮ່ວມມືໃນການປະຕິບັດໃຫ້ສຳເລັດຜົນ.

ຜົນບັງຄັບປະຕິບັດຂອງຄຳຕັດສີນ ນອກຈາກຈະໄດ້ກຳນົດໄວ້ໃນລັດຖະທຳມະນູນ ດັ່ງທີ່ກ່າວມາຂ້າງເທິງແລ້ວ ຍັງໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງອີກເຊັ່ນ: ບັນດາຄຳຕັດສີນ ແລະ ນິຕິກຳຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ໄດ້ສົ່ງໄປຍັງອົງການປະຕິບັດຄຳຕັດສີນຂອງສານ ແມ່ນມີຜົນບັງຄັບຕໍ່ບຸກຄົນ ແລະ ອົງການທີ່ກ່ຽວຂ້ອງຊຶ່ງຕ້ອງໄດ້ປະຕິບັດຢ່າງເຂັ້ມງວດ, ທຸກອົງການພັກ, ອົງການລັດ, ແນວລາວສ້າງຊາດ, ອົງການມະຫາຊົນ, ອົງການສັງຄົມ, ວິສາຫະກິດ ແລະ ພົນລະເມືອງທຸກຄົນຕ້ອງເຄົາລົບ ພ້ອມກັນນັ້ນກໍມີພັນທະໃຫ້ການຮ່ວມມື, ຊ່ວຍເຫຼືອອັນຈຳເປັນແກ່ພະນັກງານປະຕິບັດຄຳຕັດສີນຂອງສານ.

ດັ່ງນັ້ນ, ຄຳສັ່ງຂອງອົງການປະຕິບັດຄຳຕັດສີນຂອງສານ ທີ່ອອກຢ່າງຖືກຕ້ອງໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ ເພື່ອປະຕິບັດຄຳຕັດສີນຂອງສານ ແລະ ນິຕິກຳອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ ແມ່ນມີຄຸນຄ່າຄືກັນກັບຄຳສັ່ງຂອງສານ ແລະ ມີຜົນບັງຄັບປະຕິບັດສຳລັບບຸກຄົນ ແລະ ອົງການ, ການຫຼີກລ້ຽງບໍ່ຍອມປະຕິບັດຄຳສັ່ງດັ່ງກ່າວ ໂດຍເຈດຕະນາ ຫຼື ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານປະຕິບັດຄຳຕາດສີນຂອງສານ ຫຼື ບຸກຄົນອື່ນທີ່ເຂົ້າຮ່ວມໃນການປະຕິບັດຄຳຕັດສີນຂອງສານ ດ້ວຍການຂົ່ມຂູ່, ໃຊ້ຄວາມຮຸນແຮງ ຫຼື ດ້ວຍຮູບການອື່ນຖືວ່າເປັນການກະທຳຜິດທາງອາຍາ ແລະ ຈະຖືກລົງໂທດຕາມກົດໝາຍ[4].

**References:**


1. ລັດຖະທຳມະນູນແຫ່ງ ສປປລາວ, ສະບັບເລກທີ 63/ສພຊ ລົງວັນທີ 8 ທັນວາ 2015;
2. ກົດໝາຍວ່າດ້ວຍການປະຕິບັດຄຳຕັດສີນຂອງສານ, ສະບັບເລກທີ 12/ສພຊ, ລົງວັນທີ 17 ພະຈິກ 2021;
3. ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສີນຂອງສານ (ສະບັບປັບປຸງ) ປີ 2008;
4. ຕຳລາກໍ່ສ້າງວິຊາຊີບປະຕິບັດຄຳຕັດສີນຂອງສານ ( ເຫຼັ້ມທີ II: ພາກທັກສະສະເພາະ ) ຂອງສະຖາບັນຍຸຕິທຳແຫ່ງຊາດ, ປີ 2020.


[3] ມາດຕາ 98 (ປັບປຸງ) ຂອງລັດຖະທຳມະນູນແຫ່ງ ສປປລາວ, ສະບັບເລກທີ 63/ສພຊ ລົງວັນທີ 8 ທັນວາ 2015

[4] ມາດຕາ 31 ຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສນຂອງສານ, ເລກທີ 04/ສພຊ ລົງວັນທີ 25 ກໍລະກົດ 2008